ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 387 /ນວ
ວັນທີ 21.3.2023

# ຂໍ້ຕົກລົງ
# ວ່າດ້ວຍການແບ່ງຄວາມຮັບຜິດຊອບ
# ໃນການຈັດຕັ້ງປະຕິບັດແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ຮອດປີ 2030 ຂອງ ນະຄອນຫຼວງວຽງຈັນ

- ອີງຕາມ ມາດຕາ 20 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ມາດຕາ 13 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍການແບ່ງຄວາມຮັບຜິດອຊບໃນການຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ສະບັບເລກທີ 10/ນຍ, ລົງວັນທີ 05 ກຸມພາ 2019;
- ອີງຕາມ ມະຕິ ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ II ສະບັບເລກທີ 008/ສປນວ, ລົງວັນທີ 10 ກຸມພາ 2023 ວ່າດ້ວຍການຮັບຮອງເອົາ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ນະຄອນຫຼວງວຽງຈັນ.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດການແບ່ງຄວາມຮັບຜິດຊອບຂອງບັນດາພະແນກການທີ່ກ່ຽວຂ້ອງ ແລະ ອົງການປົກຄອງຂັ້ນເມືອງ ແລະ ບ້ານ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ເພື່ອວາງແຜນການນຳໃຊ້ທີ່ດິນ ທີ່ຢູ່ໃນການຄຸ້ມຄອງການນຳໃຊ້ທີ່ດິນຂອງບັນດາຂະແໜງການ ໃຫ້ບັນລຸເປົ້າໝາຍ ແລະ ຕົວເລກຄາດໝາຍຂອງເນື້ອທີ່ດິນ ທີ່ຈະສະຫງວນ ແລະ ອະນຸລັກໄວ້ ເພື່ອເປັນທີ່ດິນປ່າໄມ້ປົກຫຸ້ມ ຊາວສີ່ຈຸດເກົ້າສິບຫົກ ສ່ວນຮ້ອຍ ແລະ ເນື້ອທີ່ດິນທີ່ຈະນຳໃຊ້ ແລະ ພັດທະນາ ເຈັດສິບຫ້າຈຸດສູນສີ່ ສ່ວນຮ້ອຍ ລວມທັງການສ້າງແຜນດຳເນີນງານການຄຸ້ມຄອງສິ່ງແວດລ້ອມໃນແຕ່ລະດ້ານ ແລະ ວາງແຜນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການກຳນົດເຂດປະເມີນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ ເພື່ອຫຼຸດຜ່ອນຄວາມສ່ຽງໄພພິບັດທຳມະຊາດ ຕາມທີ່ໄດ້ກຳນົດໄວ້ໃນແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂອງນະຄອນຫຼວງວຽງຈັນ.

**ມາດຕາ 2 ຄວາມຮັບຜິດຊອບຂອງພະແນກການທີ່ກ່ຽວຂ້ອງ.**

ພະແນກການທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ຮອດປີ 2030 ຂອງນະຄອນຫຼວງວຽງຈັນ ດັ່ງນີ້: Bs

1. **ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີຄວາມຮັບຜິດຊອບ**:

1.1. ເປັນໃຈກາງຈັດຕັ້ງປະຕິບັດແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ຮອດປີ 2030 ໂດຍສົມທົບກັບບັນດາພະແນກການ, ອົງການປົກຄອງຂັ້ນເມືອງ ແລະ ບ້ານທີ່ກ່ຽວຂ້ອງ ເພື່ອກຳນົດແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນ ໂດຍໃຫ້ສອດຄ່ອງກັບແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນ ຂອງກະຊວງທີ່ຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດ ແນໃສ່ບັນລຸຕາມເປົ້າໝາຍ ແລະ ຕົວເລກຄາດໝາຍ ຕາມທີ່ກຳນົດໄວ້ໃນມາດຕາ 1 ຂອງຂໍ້ຕົກລົງສະບັບນີ້ ແລ້ວສະເໜີໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ ຮັບຮອງ ຕາມການສະເໜີຂອງພະແນກການທີ່ກ່ຽວຂ້ອງ ພ້ອມທັງດຳເນີນການປະເມີນ ແລະ ລາຍງານການຈັດຕັ້ງປະຕິບັດໃຫ້ອົງການປົກຄອງ ນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິໃນແຕ່ລະໄລຍະ;

1.2. ຄຸ້ມຄອງທີ່ດິນທຸກປະເພດພາຍໃນນະຄອນຫຼວງວຽງຈັນ ຢ່າງລວມສູນ, ຄົ້ນຄວ້າສະເໜີອົງການປົກຄອງນະຄອນຫຼວງວຽງຈັນ ຕົກລົງແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດໃຫ້ບັນດາພະແນກການ, ອົງການປົກຄອງຂັ້ນເມືອງ ແລະ ບ້ານ ພ້ອມທັງຕິດຕາມ ກວດກາການການນຳໃຊ້ທີ່ດິນ ເພື່ອໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ; ນອກຈາກນັ້ນ ຍັງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 169 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019.

1.3. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນ ນະຄອນຫຼວງວຽງຈັນ, ອົງການປົກຄອງຂັ້ນເມືອງ ແລະ ບ້ານ ດຳເນີນການສຳຫຼວດ, ເກັບກຳຂໍ້ມູນເນື້ອທີ່ດິນແຕ່ລະປະເພດໃນແຕ່ລະເຂດ ທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ ຂອງບັນດາພະແນກການທີ່ກ່ຽວຂ້ອງພາຍໃນ ນະຄອນຫຼວງວຽງຈັນ, ເມືອງ ແລະ ບ້ານ;

1.4. ຊຸກຍູ້ໃຫ້ພະແນກການຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດ ສ້າງແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ສອດຄ່ອງກັບແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນຂອງກະຊວງຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງ ນະຄອນຫຼວງວຽງຈັນ, ເມືອງ ແລະ ບ້ານ;

1.5. ປະສານສົມທົບກັບບັນດາພະແນກການຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດ, ອົງການປົກຄອງຂັ້ນເມືອງ ແລະ ບ້ານ ທີ່ກ່ຽວຂ້ອງ ດຳເນີນການຈັດສັນແຫຼ່ງນ້ຳຕາມອ່າງຮັບນ້ຳ ແລະ ການນຳໃຊ້ທີ່ດິນຕາມຄວາມຄ້ອຍຊັນ ໂດຍການນຳໃຊ້ຂໍ້ມູນຈາກພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ ແລະ ສຳຫຼວດພາກສະໜາມ ແລ້ວກຳນົດເປັນເຂດສະຫງວນ ແລະ ອະນຸລັກ; ເຂດນຳໃຊ້ ແລະ ພັດທະນາທີ່ດິນ ໃຫ້ສອດຄ່ອງກັບແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ;

1.6. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນ ນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ດຳເນີນການເກັບກຳສະຖິຕິທີ່ດິນແຕ່ລະປະເພດ ເພື່ອຂຶ້ນສຳມະໂນທີ່ດິນ, ຂຶ້ນທະບຽນອອກໃບຕາດິນຂອງລັດ ແລະ ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ທີ່ເປັນພົນລະເມືອງລາວ ທີ່ນອນໃນເນື້ອທີ່ດິນທີ່ຈະນຳໃຊ້ ແລະ ພັດທະນາ ລວມທັງການຂຶ້ນບັນຊີທີ່ດິນຂອງລັດ ທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ ຂອງອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ, ທີ່ດິນທີ່ສານຕັດສິນໃຫ້ຮິບເປັນຂອງລັດ ຫຼື ໃຫ້ລັດເປັນຜູ້ຄຸ້ມຄອງ;

1.7. ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານ ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ໃນການຂຶ້ນສຳມະໂນທີ່ດິນ, ຂຶ້ນທະບຽນອອກໃບຕາດິນ, ການຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ ລວມທັງການແບ່ງແຍກ ແລະ ການໂຮມຕອນດິນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ;Bs

1.8. ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ລວມທັງແຜນການນຳໃຊ້ທີ່ດິນແຕ່ລະປະເພດ ຢ່າງເປັນປົກກະຕິ;

1.9. ຄຸ້ມຄອງ ແລະ ຕິດຕາມ ກວດກາ ພ້ອມທັງຄົ້ນຄວ້າອອກມາດຕະການແກ້ໄຂບັນຫາການຈັບຈອງທີ່ດິນ, ການຄອບຄອງທີ່ດິນທີ່ຜິດກົດໝາຍ ແລະ ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ;

1.10. ຄົ້ນຄວ້າການສະເໜີຫັນປ່ຽນທີ່ດິນຈາກປະເພດໜຶ່ງໄປເປັນທີ່ດິນປະເພດອື່ນ ເພື່ອຮັບປະກັນຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສອດຄ່ອງກັບກົດໝາຍ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນແຕ່ລະປະເພດຕາມຂະແໜງການ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ໃຫ້ມີຜົນກະທົບທາງລົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;

1.11. ສ້າງຖານຂໍ້ມູນ ຂ່າວສານທີ່ດິນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ ແລະ ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ເພື່ອເປັນບ່ອນອີງໃຫ້ແກ່ການເກັບລາຍຮັບຈາກທີ່ດິນຂອງຂະແໜງການການເງິນ ແລະ ໃຫ້ເຊື່ອມຕໍ່ກັບລະບົບຂໍ້ມູນຂ່າວສານທີ່ດິນແຫ່ງຊາດ ລວມທັງເປັນບ່ອນອີງໃນການວາງແຜນພັດທະນາເສດຖະກິດ-ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ ແລະ ກຳນົດເຂດປະເມີນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ;

1.12. ເກັບກຳ, ສັງລວມ, ສຶກສາຄົ້ນຄວ້າ, ວິໄຈຂໍ້ມູນດ້ານສິ່ງແວດລ້ອມ ລວມທັງທ່າແຮງຂອງຊັບພະຍາກອນທຳມະຊາດ, ສະພາບການປ່ຽນແປງດິນຟ້າອາກາດ ແລະ ເຂດປະເມີນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ ເພື່ອກຳນົດວິທີການ ແລະ ມາດຕະການປ້ອງກັນ, ແກ້ໄຂ, ບູລະນະຟື້ນຟູ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບປະກັນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ພາຍໃນນະຄອນຫຼວງວຽງຈັນ;

1.13. ຕິດຕາມ ກວດກາ ແລະ ຊຸກຍູ້ພະແນກການທີ່ກ່ຽວຂ້ອງ ໃນການປະຕິບັດຕາມແຜນການຄຸ້ມຄອງສິ່ງແວດລ້ອມໃນແຕ່ລະດ້ານ ລວມທັງການຈັດຕັ້ງປະຕິບັດ ບັນດາມາດຕະການຫຼຸດຜ່ອນຜົນກະທົບຕໍ່ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈາກການພັດທະນາໃນແຕ່ລະຂະແໜງການ ແລະ ວາງແຜນການປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດ, ການກຳນົດເຂດປະເມີນຄວາມສ່ຽງ ຈາກການປ່ຽນແປງດິນຟ້າອາກາດ;

1.14. ປະສານສົມທົບກັບບັນດາພະແນກການທີ່ກ່ຽວຂ້ອງ ພາຍໃນນະຄອນຫຼວງວຽງຈັນ ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ ໃຫ້ສອດຄ່ອງກັບກົດໝາຍ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ແລະ ສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຂອງນະຄອນຫຼວງວຽງຈັນ ໃນແຕ່ລະໄລຍະ;

1.15. ປະສານສົມທົບກັບພະແນກການເງິນ, ພະແນກແຜນການ ແລະ ການລົງທຶນ ຄົ້ນຄວ້າຈັດສັນແຫຼ່ງທຶນ ແລະ ສະໜອງງົບປະມານຈັດຊື້ເຄື່ອງມືວັດຖຸປະກອບຮັບໃຊ້ການສຳຫຼວດ, ວັດແທກ, ວາງແຜນການນຳໃຊ້ທີ່ດິນ, ການຂຶ້ນສຳມະໂນທີ່ດິນ ແລະ ການຂຶ້ນທະບຽນອອກໃບຕາດິນ;

1.16. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ດຳເນີນການກວດກາ ແລະ ທວງຄືນທີ່ດິນຂອງລັດ ທີ່ຖືກຄອບຄອງຢ່າງຜິດກົດໝາຍ ຫຼື ຖືກບຸກລຸກ ແລະ ຖອນການມອບຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ. ໃນກໍລະນີການຄອບຄອງ ແລະ ການມອບນັ້ນ ຫາກມີເອກະສານຢັ້ງຢືນກ່ຽວກັບທີ່ດິນແລ້ວ ສະເໜີຕໍ່ເຈົ້າຄອງນະຄອນຫຼວງວຽງຈັນ ລຶບລ້າງເອກະສານດັ່ງກ່າວ ລວມທັງທີ່ດິນໃຫ້ເຊົ່າ ແລະ ສຳປະທານ ເພື່ອຮັບປະກັນການນຳໃຊ້ Bs

ຖືກຕ້ອງຕາມເປົ້າໝາຍ ແລະ ກົດໝາຍທີ່ກ່ຽວຂ້ອງ ພ້ອມທັງມີມາດຕະການແກ້ໄຂໃຫ້ຖືກຕ້ອງຕາມສະພາບຄວາມເປັນຈິງ ແລະ ກົດໝາຍທີ່ກຳນົດໄວ້;

1.17. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ດຳເນີນການກວດກາຄືນການປະຕິບັດໂຄງການພັດທະນາຕ່າງໆ ເພື່ອຜົນປະໂຫຍດສ່ວນລວມຂອງປະເທດຊາດ ລວມທັງການໂອນສິດນຳໃຊ້ທີ່ດິນຂອງບຸກຄົນ ແລະ ນິຕິບຸກຄົນ ຄືນມາເປັນຂອງລັດ ໃຫ້ປະຕິບັດຢ່າງຖືກຕ້ອງຕາມກົດໝາຍ ແລະ ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ ແລະ ຍຸຕິທຳ;

1.18. ປະສານສົມທົບພະແນກການທີ່ກ່ຽວຂ້ອງ ພາຍໃນນະຄອນຫຼວງວຽງຈັນ ແລະ ເມືອງ ດຳເນີນການກວດກາຄືນການຫັນທີ່ດິນເປັນທຶນ ເພື່ອຮັບປະກັນເຮັດໃຫ້ທີ່ດິນມີມູນຄ່າເພີ່ມຂຶ້ນ ແລະ ບໍ່ໃຫ້ທີ່ດິນຂອງລັດສູນເສຍ, ສ່ວນທີ່ດິນ ແລະ ເຮືອນຂອງລັດ ທີ່ມີຄວາມໝາຍທາງດ້ານປະຫວັດສາດ, ດ້ານການເມືອງ ແລະ ສະຖາປະຕິຍະກຳເກົ່າແກ່ຂອງຊາດລາວ ໃຫ້ອະນຸລັກຮັກສາໄວ້;

1.19. ກວດກາຄືນ ແລະ ປັບປຸງການຈັດຕັ້ງ ແລະ ບຸກຄະລາກອນ ທີ່ຈະປະຕິບັດບັນດາໜ້າວຽກງານທີ່ກ່າວມາຂ້າງເທິງນີ້ ແນໃສ່ຮັບປະກັນຄຸນນະພາບ ແລະ ມີມາດຕະຖານຄົບຖ້ວນ;

1.20. ປະເມີນຜົນການຈັດຕັ້ງປະຕິບັດ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ລວມທັງແຜນການນຳໃຊ້ທີ່ດິນແຕ່ລະປະເພດ ແລະ ກົນໄກການປະສານງານລະຫວ່າງ ພະແນກການທີ່ກ່ຽວຂ້ອງພາຍໃນ ນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໃນທຸກໆ ໜຶ່ງ ປີ, ສາມ ປີ ແລະ ຫ້າ ປີ ເພື່ອໃຫ້ເຫັນດ້ານຕັ້ງໜ້າ, ດ້ານອ່ອນ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງໃນການແກ້ໄຂ ພ້ອມທັງຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ໃນວຽກງານຄຸ້ມຄອງທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

1.21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**2. ພະແນກກະສິກຳ ແລະ ປ່າໄມ້ ມີຄວາມຮັບຜິດຊອບ:**

2.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນຕົວຈິງຂອງເນື້ອທີ່ດິນປ່າໄມ້ ແລະ ເນື້ອທີ່ດິນກະສິກຳ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ທີ່ມີຢູ່ໃນປັດຈຸບັນ ໂດຍສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ;

2.2. ສ້າງແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນປ່າໄມ້ ແລະ ທີ່ດິນກະສິກຳ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການທີ່ກ່ຽວຂ້ອງ ພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ຂອງກະຊວງກະສິກຳ ແລະ ປ່າໄມ້, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງນະຄອນຫຼວງວຽງຈັນ, ເມືອງ ແລະ ບ້ານ ແລ້ວສະເໜີໃຫ້ເຈົ້າຄອງນະຄອນຫຼວງວຽງຈັນ ພິຈາລະນາຮັບຮອງ;

2.3. ດຳເນີນການສຳຫຼວດ, ປັກຫຼັກໝາຍ ແລະ ກຳນົດຂອບເຂດທີ່ດິນ ປ່າປ້ອງກັນ, ປ່າສະຫງວນ, ລະດັບນະຄອນຫຼວງວຽງຈັນ, ລະດັບເມືອງ ແລະ ລະດັບບ້ານ, ເຂດທີ່ດິນປ່າຜະລິດ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ; Bs

2.4. ກຳນົດແຜນການ ແລະ ມາດຕະການ ໃນການຄຸ້ມຄອງ ແລະ ຕິດຕາມ ກວດກາການຟື້ນຟູປ່າໄມ້ ແລະ ການປູກໄມ້ທົດແທນ ຕາມສັນຍາພັດທະນາໂຄງການລົງທຶນທີ່ລັດຖະບານ ແລະ ນະຄອນຫຼວງວຽງຈັນ ອະນຸມັດ ຕາມກົດໝາຍ ເປັນຕົ້ນ ໂຄງການພັດທະນາໄຟຟ້າ, ໂຄງການຂຸດຄົ້ນບໍ່ແຮ່, ໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອຮັບປະກັນເນື້ອທີ່ປ່າໄມ້ໃຫ້ໄດ້ ເຈັດສິບຫ້າ ສ່ວນຮ້ອຍ ຕາມແຜນການ.

2.5. ດຳເນີນການສຳຫຼວດ, ປະເມີນຄຸນນະພາບດິນ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳແຕ່ລະປະເພດ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ພ້ອມທັງຕິດຕາມ ກວດກາ ການນຳໃຊ້ທີ່ດິນປະເພດດັ່ງກ່າວໃຫ້ຖືກຕ້ອງຕາມເປົ້າໝາຍ ເພື່ອຄ້ຳປະກັນດ້ານສະບຽງອາຫານ;

2.6. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນປ່າໄມ້ ແລະ ທີ່ດິນກະສິກຳ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;

2.7. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນ ນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໃນການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ແລະ ທີ່ດິນກະສິກຳ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ພ້ອມທັງເພີ່ມທະວີການຕິດຕາມ ກວດກາ ແລະ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

2.8. ເປັນເຈົ້າການຕິດຕາມ ກວດກາການຄຸ້ມຄອງການນຳໃຊ້ທີ່ດິນປ່າໄມ້ ແລະ ທີ່ດິນກະສິກຳ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ຕາມກົດໝາຍ;

2.9. ສ້າງແຜນດຳເນີນງານການຄຸ້ມຄອງສິ່ງແວດລ້ອມ ທີ່ພົວພັນກັບການນຳໃຊ້ທີ່ດິນປ່າໄມ້ ແລະ ທີ່ດິນກະສິກຳ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງການຈັດຕັ້ງປະຕິບັດບັນດາມາດຕະການຫຼຸດຜ່ອນຜົນກະທົບຕໍ່ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈາກການພັດທະນາໃນຂະແໜງການຂອງຕົນ ແລະ ວາງແຜນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການກຳນົດເຂດປະເມີນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ;

2.10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**3. ພະແນກອຸດສາຫະກຳ ແລະ ການຄ້າ ມີຄວາມຮັບຜິດຊອບ:**

3.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນອຸດສາຫະກຳໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ;

3.2. ສ້າງແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນອຸດສາຫະກຳໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນແຂວງ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ອຸດສາຫະກຳໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມ

ອຸດສາຫະກຳ ຂອງກະຊວງອຸດສາຫະກຳ ແລະ ການຄ້າ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງນະຄອນຫຼວງວຽງຈັນ, ເມືອງ ແລະ ບ້ານ ແລ້ວສະເໜີໃຫ້ເຈົ້າຄອງນະຄອນຫຼວງວຽງຈັນ ພິຈາລະນາຮັບຮອງ;

3.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນອຸດສາຫະກຳໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ລວມທັງທີ່ດິນບໍລິເວນນໍ້າທີ່ນອນໃນປະເພດທີ່ດິນດັ່ງກ່າວ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

3.4. ເປັນເຈົ້າການຕິດຕາມ ກວດກາການຄຸ້ມຄອງການນຳໃຊ້ທີ່ດິນອຸດສາຫະກຳໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ລວມທັງທີ່ດິນບໍລິເວນນໍ້າທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນທີ່ກ່ຽວຂ້ອງຂັ້ນແຂວງ, ເມືອງ ແລະ ບ້ານ ພ້ອມທັງມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ ແລະ ລະບຽບການ;

3.5. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນ ນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໃນການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ລວມທັງທີ່ດິນບໍລິເວນນໍ້າທີ່ນອນໃນປະເພດທີ່ດິນດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຂອງກະຊວງອຸດສາຫະກຳ ແລະ ການຄ້າ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ພ້ອມທັງເພີ່ມທະວີການ ຕິດຕາມ ກວດກາ ແລະ ມີມາດຕະການ ແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ ແລະ ລະບຽບການ;

3.6. ເປັນເຈົ້າການຕິດຕາມ ກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ລວມທັງທີ່ດິນບໍລິເວນນໍ້າທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນແຂວງ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ຕາມກົດໝາຍ;

3.7. ສ້າງແຜນດຳເນີນງານການຄຸ້ມຄອງສິ່ງແວດລ້ອມ ທີ່ພົວພັນກັບການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງການຈັດຕັ້ງປະຕິບັດບັນດາມາດຕະການຫຼຸດຜ່ອນຜົນກະທົບຕໍ່ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈາກການພັດທະນາໃນຂະແໜງການຂອງຕົນ ແລະ ວາງແຜນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການກຳນົດເຂດປະເມີນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ;

3.8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**4. ພະແນກພະລັງງານ ແລະ ບໍ່ແຮ່ ມີຄວາມຮັບຜິດຊອບ:**

4.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນອຸດສາຫະກຳໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ ລວມທັງທີ່ດິນບໍລິເວນນໍ້າທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ;

4.2. ສ້າງແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ ລວມທັງທີ່ດິນບໍລິເວນນໍ້າທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນ

ຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ອຸດສາຫະກຳໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ຂອງກະຊວງພະລັງງານ ແລະ ບໍ່ແຮ່, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງນະຄອນຫຼວງວຽງຈັນ, ເມືອງ ແລະ ບ້ານ ແລ້ວສະເໜີໃຫ້ເຈົ້າຄອງນະຄອນຫຼວງວຽງຈັນ ພິຈາລະນາຮັບຮອງ;

4.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນອຸດສາຫະກຳໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ໃຫ້ພະແນກການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

4.4. ເປັນເຈົ້າການຕິດຕາມ ກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວ ຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ພ້ອມທັງມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

4.5. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນ ນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໃນການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນອຸດສາຫະກຳໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ຂອງກະຊວງພະລັງງານ ແລະ ບໍ່ແຮ່, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ພ້ອມທັງເພີ່ມທະວີການ ຕິດຕາມ ກວດກາ ແລະ ມີມາດຕະການ ແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

4.6. ເປັນເຈົ້າການຕິດຕາມ ກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດອຸດສາຫະກຳໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ຕາມກົດໝາຍ;

4.7. ສ້າງແຜນດຳເນີນງານການຄຸ້ມຄອງສິ່ງແວດລ້ອມ ທີ່ພົວພັນກັບການນຳໃຊ້ທີ່ດິນດິນອຸດສາຫະກຳໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ ໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງການຈັດຕັ້ງປະຕິບັດບັນດາມາດຕະການຫຼຸດຜ່ອນຜົນກະທົບຕໍ່ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈາກການພັດທະນາໃນຂະແໜງການຂອງຕົນ ແລະ ວາງແຜນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການກຳນົດເຂດປະເມີນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ;

4.8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**5. ຄະນະຄຸ້ມຄອງເຂດເສດຖະກິດພິເສດ ມີຄວາມຮັບຜິດຊອບ:**

5.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ;

5.2. ສ້າງແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການ ນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ຂອງກະຊວງແຜນການ ແລະ ການລົງທຶນ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງນະຄອນຫຼວງວຽງຈັນ, ເມືອງ ແລະ ບ້ານ ແລ້ວສະເໜີໃຫ້ເຈົ້າຄອງນະຄອນຫຼວງວຽງຈັນ ພິຈາລະນາຮັບຮອງ;

5.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

5.4. ເປັນເຈົ້າການ ຕິດຕາມ ກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ພ້ອມທັງມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

5.5. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນ ນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໃນການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນອຸດສາຫະກຳ ໃນພື້ນທີ່ອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ຂອງກະຊວງແຜນການ ແລະ ການລົງທຶນ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ພ້ອມທັງເພີ່ມທະວີການຕິດຕາມກວດກາ ແລະ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

5.6. ເປັນເຈົ້າການ ຕິດຕາມ ກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ຕາມກົດໝາຍ;

5.7. ສ້າງແຜນດຳເນີນງານການຄຸ້ມຄອງສິ່ງແວດລ້ອມ ທີ່ພົວພັນກັບການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງການຈັດຕັ້ງປະຕິບັດບັນດາມາດຕະການຫຼຸດຜ່ອນຜົນກະທົບຕໍ່ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈາກການພັດທະນາໃນຂະແໜງການຂອງຕົນ ແລະ ວາງແຜນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການກຳນົດເຂດປະເມີນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ;

5.8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**6. ພະແນກໂຍທາທິການ ແລະ ຂົນສົ່ງ ມີຄວາມຮັບຜິດຊອບ:**

6.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງ

ແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ;

6.2. ສ້າງແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງນະຄອນຫຼວງວຽງຈັນ, ເມືອງ ແລະ ບ້ານ ແລ້ວສະເໜີໃຫ້ເຈົ້າຄອງນະຄອນຫຼວງວຽງຈັນ ພິຈາລະນາຮັບຮອງ;

6.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ຕາມກົດໝາຍ ແລະ ລະບຽບການ;

6.4. ເປັນເຈົ້າການຕິດຕາມ ກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ພ້ອມທັງມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

6.5. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນ ນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໃນການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ພ້ອມທັງເພີ່ມທະວີການ ຕິດຕາມ ກວດກາ ແລະ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

6.6. ເປັນເຈົ້າການຕິດຕາມ ກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ຕາມກົດໝາຍ;

6.7. ສ້າງແຜນດຳເນີນງານການຄຸ້ມຄອງສິ່ງແວດລ້ອມ ທີ່ພົວພັນກັບການນຳໃຊ້ທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງການຈັດຕັ້ງປະຕິບັດບັນດາມາດຕະການຫຼຸດຜ່ອນຜົນກະທົບຕໍ່ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຈາກການພັດທະນາໃນຂະແໜງການຂອງຕົນ ແລະ ວາງແຜນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການກຳນົດເຂດປະເມີນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ;

6.8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**7. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີຄວາມຮັບຜິດຊອບ:**

7.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນວັດທະນະທຳ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ;

7.2. ສ້າງແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນວັດທະນະທຳ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການທີ່ກ່ຽວຂ້ອງພາຍໃນແຂວງ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນວັດທະນະທຳ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງນະຄອນຫຼວງວຽງຈັນ, ເມືອງ ແລະ ບ້ານ ແລ້ວສະເໜີໃຫ້ເຈົ້າຄອງນະຄອນຫຼວງວຽງຈັນ ພິຈາລະນາຮັບຮອງ;

7.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນວັດທະນະທຳ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ຕາມກົດໝາຍ;

7.4. ເປັນເຈົ້າການຕິດຕາມ ກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນວັດທະນະທຳ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ພ້ອມທັງມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

7.5. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນແຂວງ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໃນການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນວັດທະນະທຳ ລວມທັງທີ່ດິນບໍລິເວນນ້ຳທີ່ນອນໃນປະເພດທີ່ດິນດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນວັດທະນະທຳ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ພ້ອມທັງເພີ່ມທະວີການຕິດຕາມ ກວດກາ ແລະ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ ແລະ ລະບຽບການ;

7.6. ເປັນເຈົ້າການຕິດຕາມ ກວດກາການຄຸ້ມຄອງການນຳໃຊ້ທີ່ດິນວັດທະນາທຳ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ຕາມກົດໝາຍ;

7.7. ສ້າງແຜນດຳເນີນງານການຄຸ້ມຄອງສິ່ງແວດລ້ອມ ທີ່ພົວພັນກັບການນຳໃຊ້ທີ່ດິນວັດທະນາທຳ ໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ລວມທັງການຈັດຕັ້ງປະຕິບັດບັນດາມາດຕະການຫຼຸດຜ່ອນຜົນກະທົບຕໍ່ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຈາກການພັດທະນາໃນຂະແໜງການຂອງຕົນ ແລະ ວາງແຜນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການກຳນົດເຂດປະເມີນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ;

7.8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**8. ກອງບັນຊາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມຮັບຜິດຊອບ:**

8.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ແຕ່ຕ້ອງຮັບປະກັນວຽກງານດ້ານຍຸດທະສາດການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

8.2. ສ້າງແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນໃນປະເພດທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ, ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໂດຍໃຫ້ສອດຄ່ອງກັບລະບຽບການຄຸ້ມຄອງການນຳໃຊ້ທີ່ດິນປະເພດດັ່ງກ່າວ;

8.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນສ່ວນທີ່ບໍ່ພົວພັນກັບເຂດຍຸດທະສາດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ຕາມກົດໝາຍ;

8.4. ເປັນເຈົ້າການ ຕິດຕາມ ກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ ແລະ ອົງການປົກຄອງຂັ້ນເມືອງ ພ້ອມທັງມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກ ຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

8.5. ສ້າງແຜນດຳເນີນງານການຄຸ້ມຄອງສິ່ງແວດລ້ອມ ທີ່ພົວພັນກັບການນຳໃຊ້ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ລວມທັງການຈັດຕັ້ງປະຕິບັດບັນດາມາດຕະການຫຼຸດຜ່ອນຜົນກະທົບຕໍ່ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈາກການພັດທະນາໃນຂະແໜງການຂອງຕົນ ແລະ ວາງແຜນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການກຳນົດເຂດປະເມີນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ;

8.6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 3 ຄວາມຮັບຜິດຊອບຂອງອົງການປົກຄອງເມືອງ, ເທດສະບານ, ນະຄອນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ອົງການປົກຄອງບ້ານ**

3.1. ຂໍ້າຮ່ວມ ແລະ ໃຫ້ການຮ່ວມມື ກັບບັນດາພະແນກການຂອງ ນະຄອນຫຼວງວຽງຈັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ໃນການຈັດຕັ້ງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ໃຫ້ສຳເລັດຕາມແຜນການ ແລະ ຄາດໝາຍ.

3.2. ສະໜອງຂໍ້ມູນທີ່ດິນ ທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນຂອງຕົນ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ເພື່ອສັງລວມເຂົ້າໃນການວາງແຜນນຳໃຊ້ທີ່ດິນແຕ່ລະປະເພດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3.3. ປຸກລະດົມໃຫ້ທຸກພາກສ່ວນໃນສັງຄົມ ແລະ ປະຊາຊົນໃນທ້ອງຖິ່ນຂອງຕົນເຂົ້າໃຈ ທັງປະກອບສ່ວນ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂອງ ນະຄອນຫຼວງວຽງຈັນ;

3.4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.Bs

**ມາດຕາ 4 ການລາຍງານ**

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ເປັນໃຈກາງ ແລະ ສົມທົບກັບບັນດາພະແນກການທີ່ກ່ຽວຂ້ອງຂອງນະຄອນຫຼວງວຽງຈັນ, ອົງການປົກຄອງເມືອງ ແລະ ບ້ານ ທີ່ມີໜ້າທີ່ຮັບຜິດຊອບໂດຍກົງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້, ດຳເນີນການປະເມີນຜົນ ແລະ ລາຍງານການຈັດຕັ້ງປະຕິບັດແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂອງນະຄອນຫຼວງວຽງຈັນ ໃຫ້ແກ່ອົງການປົກຄອງ ນະຄອນຫຼວງວຽງຈັນ, ສະພາປະຊາຊົນ ນະຄອນຫຼວງວຽງຈັນ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນແຕ່ໄລຍະ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ບັນດາພະແນກການ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງ ນະຄອນຫຼວງວຽງຈັນ, ອົງການປົກຄອງຂັ້ນເມືອງ, ຫ້ອງການທີ່ກ່ຽວຂ້ອງຂອງເມືອງ ແລະ ອົງການປົກຄອງບ້ານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ແລະ 3 ຂອງຂໍ້ຕົກລົງສະບັບນີ້ ເປັນເຈົ້າໃນການຈັດຕັ້ງປະຕິບັດແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂອງນະຄອນຫຼວງວຽງຈັນ ຕາມບັນດາໜ້າວຽກທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໃຫ້ບັນລຸຕາມເປົ້າໝາຍ, ຕົວເລກຄາດໝາຍ ໂດຍປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ທຸກພາກສ່ວນໃນສັງຄົມ.

ບັນດາພະແນກການ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງຂັ້ນເມືອງ, ຫ້ອງການທີ່ກ່ຽວຂ້ອງຂອງເມືອງ, ອົງການປົກຄອງບ້ານ ແລະ ທຸກພາກສ່ວນໃນສັງຄົມ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 6 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີ ຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ນະຄອນຫຼວງວຽງຈັນ
ເຈົ້າຄອງນະຄອນ

**ອາດສະພັງທອງ ສີພັນດອນ**